ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 674/ກອຫ.ຄຣ

ນະຄອນຫຼວງວຽງຈັນ, ວັນທີ 15 JUN 2018

## ຄຳແນະນຳ

### ກ່ຽວກັບການຂໍໃບອະນຸຍາດດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

- ອີງຕາມ ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 048/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມ ກົດໝາຍວ່າດ້ວຍ ຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016.
- ອີງຕາມ ຄຳແນະນຳການຂຶ້ນທະບຽນສ້າງຕັ້ງວິສາຫະກິດຕິດພັນກັບການຂໍອະນຸຍາດລົງທຶນ ຫຼື ຂໍອະນຸຍາດດຳເນີນທຸລະກິດ ຕາມຄຳສັ່ງຂອງນາຍົກ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ສະບັບເລກທີ 0537/ອຄ.ກທຄວ, ລົງວັນທີ 04 ພຶດສະພາ 2018.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 1551/ອຄ, ລົງວັນທີ 31 ສິງຫາ 2016.

ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ເນື້ອໃນຈິດໃຈ ຄຳແນະນຳຂອງທ່ານລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0537/ອຄ.ກທຄວ, ລົງວັນທີ 04 ພຶດສະພາ 2018 ໃຫ້ມີຄວາມເປັນເອກະພາບ ແລະ ໄດ້ຮັບຜົນສຳເລັດ ໃນການປັບປຸງ ແລະ ແກ້ໄຂຂໍ້ຫຍຸ້ງຍາກ ໃນການເລີ່ມຕົ້ນທຸລະກິດ ດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃຫ້ມີຄວາມສະດວກ, ຕໍ່ເນື່ອງ, ວ່ອງໄວ ແລະ ສອດຄ່ອງກັນ ຕາມເນື້ອໃນຈິດໃຈຂອງຄຳແນະນຳດັ່ງກ່າວ.

### ຫົວໜ້າ ກົມອຸດສາຫະກຳ ແລະ ຫັດຖະກຳ ອອກຄຳແນະນຳ ດັ່ງນີ້

I. ການຂໍໃບອະນຸຍາດດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ:

ພາຍຫຼັງຜູ້ລົງທຶນໄດ້ຮັບໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ ຈາກຂະແໜງການທີ່ກ່ຽວຂ້ອງແລ້ວ ກ່ອນຈະເຄື່ອນໄຫວທຸລະກິດໃນກິດຈະການດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດ ຕາມຂັ້ນຕອນ ແລະ ລະບຽບການ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ. ເອກະສານປະກອບ ມີດັ່ງນີ້:

1. ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ ຈາກຂະແໜງການທີ່ກ່ຽວຂ້ອງ;
2. ບົດສະເໜີຫຍໍ້ກ່ຽວກັບໂຄງການລົງທຶນສ້າງຕັ້ງກິດຈະການດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ;
3. ໃບມອບສິດ ຫຼື ໃບມອບສັນທະ ຈາກຜູ້ລົງທຶນ (ໃນກໍລະນີຜູ້ລົງທຶນບໍ່ສາມາດມາດ້ວຍຕົນເອງ);
4. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ(Passport) ຂອງຜູ້ລົງທຶນ ແລະ ຜູ້ມາພົວພັນເອກະສານ.



Scanned with CamScanner

ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ໃຫ້ຜູ້ລົງທຶນຈັດຕັ້ງປະຕິບັດຕາມຂັ້ນຕອນການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ລະບຸໄວ້ໃນຂໍ້ II, ຖ້າບໍ່ມີຄວາມຄືບໜ້າ ພາຍໃນ 180 ວັນ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ມີເງື່ອນໄຂ.

## II. ຂັ້ນຕອນການ ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ພາຍຫຼັງຜູ້ລົງທຶນໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການອຸດສາຫະກຳ ແລະ ການຄ້າແລ້ວ ຕ້ອງປະຕິບັດດັ່ງນີ້:

1. ເຮັດບົດວິພາກເສດຖະກິດ - ເຕັກນິກ ລະອຽດ ແລ້ວສົ່ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຄຸ້ມຄອງ ແລະ ສົ່ງເສີມ ເປັນຕົ້ນ ການຈັດກອງປະຊຸມປຶກສາຫາລື, ການລົງກວດກາດ້ານສະຖານທີ່ຕັ້ງໂຮງງານ;
2. ພົວພັນນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍໃບຢັ້ງຢືນດ້ານສິ່ງແວດລ້ອມ (ຖ້າແມ່ນກິດຈະການທີ່ນອນໃນບັນຊີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ);
3. ພົວພັນນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອຂໍໃບອະນຸຍາດປຸກສ້າງ. ຫຼັງຈາກນັ້ນຈຶ່ງສາມາດບຸກເບີກເນື້ອທີ່ ແລະ ກໍ່ສ້າງໂຮງງານໄດ້.
4. ຫຼັງຈາກກໍ່ສ້າງໂຮງງານ, ຕິດຕັ້ງເຄື່ອງຈັກສຳເລັດ ແລະ ສາມາດຜະລິດທົດລອງໄດ້ ຈຶ່ງສະເໜີຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ແລະ ລະບຽບການທີ່ກ່ຽວຂ້ອງ.

## III. ຂໍ້ຫ້າມ

1. ສຳລັບຜູ້ລົງທຶນ:
   - 1.1. ບຸກເບີກເນື້ອທີ່ ແລະ ກໍ່ສ້າງໂຮງງານ ກ່ອນໄດ້ຮັບໃບອະນຸຍາດປຸກສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
   - 1.2. ສ້າງຕັ້ງໂຮງງານຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຫຼື ເຂດຫວງຫ້າມທາງການ;
   - 1.3. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.
2. ສຳລັບພະນັກງານ
   - 2.1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ;
   - 2.2. ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;
   - 2.3. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## IV. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຄຳແນະນຳ ສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ຕາມກົດໝາຍ ແລະ ລະບຽບການກຳນົດ.

## V. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ວັນທີ 01 ກໍລະກົດ 2018 ເປັນຕົ້ນໄປ.

ຫົວໜ້າກົມ

ມະໂນຣັກ ຣາຊະຈັກ



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ .......................................
ບ້ານ ............., ເມືອງ ........., ແຂວງ...................
ເບີໂທລະສັບ:..........................

# (ຮ່າງ)ບົດສະເໜີຫຍໍ້

ກ່ຽວກັບການຂໍດຳເນີນທຸລະກິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

- ອີງຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມກົດໝາຍກົດໝາຍວ່າດ້ວຍ ຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເຄມີ ສະບັບເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016.

## ພາກທີ I
## ສະພາບລວມຂອງໂຄງການ

1. ຂໍ້ມູນພື້ນຖານ:
   - ຊື່ ແລະ ນາມສະກຸນ ຜູ້ລົງທຶນ....................................................................................
   - ປະຈຸບັນຢູ່ບ້ານ..........................., ເມືອງ................................, ແຂວງ........................
     ສັນຊາດ:..........................., ເບີໂທ: ......................, ແຟັກ:..............................................
   - ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ພັດສະປອດ ຄັດຕິດມາພ້ອມ.

2. ຈຸດປະສົງ ຂອງໂຄງການ:
   ..................................................................................................................
   ..................................................................................................................
   ..................................................................................................................

3. ທຶນຂອງໂຄງການ:
   - ທຶນທັງໝົດ: ....................................................................................................
   - ທຶນຄົງທີ່:.........................................................................................................
   - ທຶນໝູນວຽນ:.....................................................................................................
   - ທຶນຈົດທະບຽນ: ...............................................................................................

## ພາກທີ II
## ຂໍ້ມູນກ່ຽວກັບໂຮງງານ

1. ສະຖານທີ່ສ້າງຕັ້ງໂຮງງານ:
   - ຊື່ວິສາຫະກິດ:.......................................................................................................



Scanned with CamScanner

- ທີ່ຕັ້ງສໍານັກງານ: ບ້ານ ................., ເມືອງ ...................., ແຂວງ:......................................
- ຊື່ໂຮງງານ: ..................................................................ເບີໂທລະສັບ..........................
- ທີ່ຕັ້ງຂອງໂຮງງານ: ບ້ານ .................., ເມືອງ........................., ແຂວງ................................
- ດໍາເນີນກິດຈະການ: ...................................................................................................
- ເນື້ອທີ່ທັງໝົດຂອງຂອບເຂດໂຮງງານ.........................................................................ຕາແມັດ.

2. ລາຍການວັດຖຸດິບ:

1) ..........................................................................................................
2) ..........................................................................................................
3) ..........................................................................................................

3. ລາຍການຜະລິດຕະພັນ:

1) ..........................................................................................................
2) ..........................................................................................................
3) ..........................................................................................................

4. ແຜນການຈໍາໜ່າຍ:

1) ພາຍໃນ...................................................................................................%
2) ຕ່າງປະເທດ.............................................................................................%

5. ແຜນການນໍາໃຊ້ແຮງງານ:

ແຮງງານທັງໝົດ..................ຄົນ, ແຮງງານຄົນລາວ..............ຄົນ, ແຮງງານຕ່າງປະເທດ.............ຄົນ.

6. ແຜນການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ເຄມີ ໂດຍຫຍໍ້:

......................................................................................................................
......................................................................................................................
......................................................................................................................
......................................................................................................................

ດັ່ງນັ້ນ, ຂ້າພະເຈົ້າໃນນາມເຈົ້າຂອງທຸລະກິດ ຈຶ່ງໄດ້ເຮັດບົດສະເໜີຫຍໍ້ກ່ຽວກັບການລົງທຶນ ຂ້າງເທິງນີ້ ມາຍັງທ່ານ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າພິຈາລະນາດ້ວຍ.

ທີ່ ............................, ວັນທີ......................

ຜູ້ລົງທຶນ



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

______________________

______________________

ເລກທີ /.......

ທີ......................, ລົງວັນທີ

# ໃບອະນຸຍາດດຳເນີນທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແປງແຕ່ງ ເລກທີ 048/ສພຊ, ລົງວັນທີ 27/12/2013.
- ອີງຕາມ ກົດໝາຍວ່າດ້ວຍ ຫັດຖະກຳ ເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008.
- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງເຄມີ ເລກທີ 07/ສພຊ, ລົງວັນທີ 10 ພະຈິກ 2016.

ກົມ ອຸດສາຫະກຳ ແລະ ຫັດຖະກຳ ອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ແກ່ວິສາຫະກິດ:

- ວິສາຫະກິດ (ຊື່):
    - ພາສາລາວ..........................................................................................
    - ພາສາຕ່າງປະເທດ..............................................................................;
- ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ, ສະບັບເລກທີ........../......., ລົງວັນທີ..................;
- ເລກລະຫັດວິສາຫະກິດ.............., ເລກປະຈຳຕົວຜູ້ເສຍອາກອນ..........................................;
- ທີ່ຕັ້ງສຳນັກງານ:......................................................................................;
- ທີ່ຕັ້ງໂຮງງານ:..........................................................................................;
- ປະກອບທຸລະກິດ ໃນກິດຈະການດ້ານ:
    1) ..........................................................................................
    2) ..........................................................................................

ໃບອະນຸຍາດດຳເນີນທຸລະກິດສະບັບນີ້ ມີອາຍຸນຳໃຊ້ໄດ້ເຖິງວັນທີ..... ເດືອນ...... ປີ.......... ແລະ ຕ້ອງມາຕໍ່ທຸກຄັ້ງກ່ອນໝົດອາຍຸນຳໃຊ້ຕາມລະບຽບການ.

ຫົວໜ້າກົມ

**ໝາຍເຫດ:** ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ໃຫ້ປະຕິບັດຕາມຄຳແນະນຳ ຂອງກົມອຸດສາຫະກຳ ແລະ ຫັດຖະກຳ ເລກທີ...../.., ລົງວັນທີ......................ແລະ ໃຫ້ລາຍງານຄວາມຄືບໜ້າຂອງໂຄງການພາຍໃນ 90 ວັນ, ຖ້າບໍ່ມີການຈັດຕັ້ງປະຕິບັດໂຄງການ ພາຍໃນ 180 ວັນ ຈະຖອນໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ມີເງື່ອນໄຂ.

Scanned with CamScanner

# ບັນຊີ - I

## ການແບ່ງຂັ້ນຄຸ້ມຄອງ ໃນກິດຈະການອຸດສາຫະກຳ ແລະ ຫັດຖະກຳ

------------------

ກ. ກິດຈະການທີ່ນອນໃນບັນຊີຄວບຄຸມ ຂອງຂະແໜງແຜນການ ແລະການລົງທຶນ

1. ການຜະລິດ ຫຼື ປຸງແຕ່ງນ້ຳມັນ (Fuel Oil) ນັບທັງການຜະລິດຄືນໃໝ່ (Recycle)
2. ການຜະລິດ ຫຼື ປຸງແຕ່ງແຮ່ຫາຍາກ (Rare Earth) ທັງໝົດ 17 ທາດ
3. ກິດຈະການຜະລິດ ຊີມັງ (ລວມທັງກິດຈະການບົດກະລິງເກີ)
4. ໂຮງງານບຳບັດ , ກຳຈັດ, ຜະລິດຄືນໃໝ່ (Recycle) ສິ່ງເສດເຫຼືອທຸກປະເພດ ເຊັ່ນ: ສິ່ງເສດເຫຼືອເອເລັກໂຕຼນິກ, ເຄື່ອງໄຟຟ້າ, ໝໍ້ໄຟເກົ່າ, ເສດເຫຼັກ, ປະລາດສະຕິກ ແລະ ສິ່ງເສດເຫຼືອອື່ນໆ).

ຂ. ກິດຈະການ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງອຸດສາຫະກຳ ແລະການຄ້າ (ເປັນຜູ້ອອກອະນຸຍາດ)

1. ການຜະລິດ ຜະລິດຕະພັນຢາສູບ (ມີເງື່ອນໄຂ)
2. ອຸດສາຫະກຳໄມ້ ແລະ ຜະລິດຕະພັນຈາກໄມ້ ແລະ ຫວາຍ, ຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ ແລະ ການຜະລິດເຄື່ອງເຟີນີເຈີ (ມີເງື່ອນໄຂ)
3. ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາ ແລະ ຜະລິດຕະພັນ ການຢາຈາກພືດ (ມີເງື່ອນໄຂ)
4. ອຸດສາຫະກຳທາດເຄມີ ແລະ ຜະລິດຕະພັນເຄມີ (ມີເງື່ອນໄຂ)
5. ອຸດສາຫະກຳໂລຫະຂັ້ນພື້ນຖານ (ມີເງື່ອນໄຂ)

☑ ນອກນີ້ ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໃນການອອກໃບອະນຸຍາດດຳເນີນທຸລະກິດສຳລັບບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະໜາດໃຫຍ່ (ໂຮງງານຂະໜາດ 201 ແຮງມ້າ ຫຼື ແຮງງານ 201 ຄົນຂຶ້ນໄປ).

ຄ. ກິດຈະການ ທີ່ຂຶ້ນກັບການຄຸ້ມຄອງຂອງພະແນກອຸດສາຫະກຳ ແລະການຄ້າຂັ້ນແຂວງ (ເປັນຜູ້ອອກອະນຸຍາດ)

1. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ອອກໃບອະນຸຍາດດຳເນີນທຸລະກິດສຳລັບບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະໜາດກາງ ແລະ ນ້ອຍ ແລະ ຕາມການມອບໝາຍຂອງກະຊວງ (ໂຮງງານຂະໜາດ 200 ແຮງມ້າ ລົງມາ ຫຼື ແຮງງານ 200 ຄົນລົງມາ).

ງ. ກິດຈະການ ທີ່ຂຶ້ນກັບການຄຸ້ມຄອງຂອງຫ້ອງການອຸດສາຫະກຳ ແລະການຄ້າຂັ້ນເມືອງ (ເປັນຜູ້ອອກອະນຸຍາດ)

1. ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ ອອກໃບອະນຸຍາດດຳເນີນທຸລະກິດ ພາຍໃຕ້ການຊີ້ນຳ ແລະ ການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 619 /ກອຫ.ຄຣ

ນະຄອນຫຼວງວຽງຈັນ, ວັນທີ 5 ມິຖຸນາ 2018

## ສະໂນດນຳສົ່ງ

ຮຽນ: ທ່ານ ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ.

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 01 | ບັນຊີ - I<br>ການແບ່ງຂັ້ນຄຸ້ມຄອງ ໃນກິດຈະການ ອຸດສາຫະກຳ ແລະ ຫັດຖະກຳ | 01 ສະບັບ | - ເພື່ອພິຈາລະນາ |

ຫົວໜ້າກົມ

ມະໂນຣັກ ຣາຊະຈັກ



Scanned with CamScanner

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

# ການຈັດຕັ້ງປະຕິບັດ
# ການອະນຸຍາດດຳເນີນທຸລະກິດ
# ດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ວັນທີ 22 ມິຖຸນາ 2018.

ສະເໜີໂດຍ: ກົມ ອຸດສາຫະກຳ ແລະ ຫັດຖະກຳ, ກຊ ອຄ

---

ຫົວຂໍ້ສະເໜີ ມີຄື:

I. ການແບ່ງຂັ້ນຄຸ້ມຄອງກ່ຽວກັບການອອກໃບອະນຸຍາດດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

II. ຄຳແນະນຳກ່ຽວກັບການຂໍໃບອະນຸຍາດດຳເນີນທຸລະກິດ ດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

III. ຮູບແບບໃບອະນຸຍາດດຳເນີນທຸລະກິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.



Scanned with CamScanner

I. ການແບ່ງຂັ້ນຄຸ້ມຄອງກ່ຽວກັບການອອກໃບອະນຸຍາດ ດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

1. ກິດຈະການທີ່ນອນໃນບັນຊີຄວບຄຸມຂອງກະຊວງແຜນການ ແລະ ການລົງທຶນ:

1.1 ການຜະລິດ ຫຼື ປຸງແຕ່ງນໍ້າມັນ ນັບທັງການຜະລິດຄືນໃໝ່;

1.2 ການຜະລິດ ຫຼື ປຸງແຕ່ງແຮ່ທາຍາກ ທັງໝົດ 17 ທາດ;

1.3 ກິດຈະການຜະລິດຊີມັງ(ລວມທັງກິດຈະການບົດກະລິງເກີ);

1.4 ໂຮງງານບຳບັດ, ກຳຈັດ, ຜະລິດຄືນໃໝ່ສິ່ງເສດເຫຼືອທຸກປະເພດ ເຊັ່ນ: ສິ່ງເສດເຫຼືອເອເລັກໂຕຼນິກ, ເຄື່ອງໄຟຟ້າ, ໝໍ້ໄຟເກົ່າ, ເສດເຫຼັກ, ປະລາດສະຕິກ ແລະ ອື່ນໆ.

2. ກິດຈະການທີ່ຂື້ນກັບການຄຸ້ມຄອງຂອງກະຊວງ ອຄ (ເປັນຜູ້ອອກອະນຸຍາດ):

2.1 ກິດຈະການທີ່ນອນໃນບັນຊີຄວບຄຸມຂອງກະຊວງ ອຄ (ກິດຈະການມີເງື່ອນໄຂ).

1. ການຜະລິດ ຜະລິດຕະພັນຢາສູບ;
2. ອຸດສາຫະກຳໄມ້, ຜະລິດຕະພັນຈາກໄມ້, ຫວາຍ, ຜະລິດຕະພັນຈາກເຟືອງ ແລະ ວັດຖຸຈັກສານ ແລະ ການຜະລິດເຄື່ອງເຟີນີເຈີ;
3. ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງແຕ່ງຢາ ແລະ ຜະລິດຕະພັນການຢາຈາກພືດ;
4. ອຸດສາຫະກຳທາດເຄມີ ແລະ ຜະລິດຕະພັນເຄມີ;
5. ອຸດສາຫະກຳໂລຫະຂັ້ນພື້ນຖານ.



Scanned with CamScanner

## 2.2 ກິດຈະການທີ່ບໍ່ນອນໃນບັນຊີຄວບຄຸມຂອງກະຊວງ ອຄ (ກິດຈະການບໍ່ມີເງື່ອນໄຂ)

ກະຊວງ ອຄ ຍັງຮັບຜິດຊອບ ອອກໃບອະນຸຍາດດຳເນີນທຸລະກິດຕື່ມອີກ ສຳລັບໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະໜາດໃຫຍ່ (ໂຮງງານຂະໜາດ 201 ແຮງມ້າ ຫຼື ແຮງງານຄົນ 201 ຄົນຂຶ້ນໄປ);

3. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ຮັບຜິດຊອບອອກໃບອະນຸຍາດດຳເນີນທຸລະກິດສຳລັບໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂະໜາດ ກາງ ແລະ ນ້ອຍ ແລະ ຕາມການມອບໝາຍຂອງກະຊວງ(ໂຮງງານຂະໜາດ 200 ແຮງມ້າ ຫຼື ແຮງງານຄົນ 200 ຄົນ ລົງມາ);
4. ຫ້ອງການ ອຸດສາຫະກຳ ແລະ ການຄ້າ ນະຄອນ, ເມືອງ ຮັບຜິດຊອບ ອອກໃບອະນຸຍາດດຳເນີນທຸລະກິດພາຍໃຕ້ການຊີ້ນຳ ແລະ ການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

## II. ຄຳແນະນຳກ່ຽວກັບການຂໍໃບອະນຸຍາດດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ

ກ. ການຂໍໃບອະນຸຍາດດຳເນີນທຸລະກິດ:

ເອກະສານປະກອບ ມີດັ່ງນີ້:

1. ສຳເນົາໃບທະບຽນວິສາຫະກິດ;
2. ບົດສະເໜີຫຍໍ້ກ່ຽວກັບການຂໍດຳເນີນທຸລະກິດດ້ານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ(ຕາມຮ່າງບົດສະເໜີຫຍໍ້ຂອງໂຄງການ ທີ່ກົມ ອຫ ໄດ້ສ້າງຂຶ້ນ);
3. ສຳເນົາໃບມອບສິດ ຫຼື ໃບມອບສັນທະ ຈາກຜູ້ລົງທຶນ (ໃນກໍລະນີຜູ້ລົງທຶນບໍ່ສາມາດມາດ້ວຍຕົນເອງ);
4. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ(Passport) ຂອງຜູ້ລົງທຶນ ແລະ ຜູ້ມາພົວພັນເອກະສານ.

ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດແລ້ວ ໃຫ້ຜູ້ລົງທຶນຈັດຕັ້ງປະຕິບັດຕາມຂັ້ນຕອນການສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານ ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ລະບຸໄວ້ໃນຂໍ້ II, ຖ້າບໍ່ມີຄວາມຄືບໜ້າ ພາຍໃນ 180 ວັນ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ໂດຍບໍ່ມີເງື່ອນໄຂ.



Scanned with CamScanner

ຂ. ການອອກໃບອະນຸຍາດດຳເນີນທຸລະກິດ:

- ສຳລັບທຸລະກິດ(ກິດຈະການ) ບໍ່ມີເງື່ອນໄຂ ຕ້ອງອອກໃຫ້ພາຍໃນ 03 ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ.
- ສຳລັບທຸລະກິດ(ກິດຈະການ) ທີ່ມີເງື່ອນໄຂຕ້ອງອອກໃຫ້ພາຍໃນ 10 ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ.

ໂດຍອີງຕາມ ຄຳແນະນຳ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ່ 0537/ອຄ.ກທຄວ, ລົງວັນທີ່ 04 ພຶດສະພາ 2018.

ຄ. ຂັ້ນຕອນການ ສ້າງຕັ້ງ ແລະ ດ□າເນີນກິດຈະການໂຮງງານ:

ພາຍຫຼັງຜູ້ລົງທຶນໄດ້ຮັບໃບອະນຸຍາດດຳເນີນທຸລະກິດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ແລ້ວ ຕ້ອງປະຕິບັດດັ່ງນີ້:

1. ເຮັດບົດວິພາກເສດຖະກິດ - ເຕັກນິກ ລະອຽດ ແລ້ວສົ່ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຄຸ້ມຄອງ ແລະ ສົ່ງເສີມ ເປັນຕົ້ນ ການຈັດກອງປະຊຸມປຶກສາຫາລື, ການລົງກວດກາດ້ານສະຖານທີ່ຕັ້ງໂຮງງານ;
2. ພົວພັນນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຂໍໃບຢັ້ງຢືນດ້ານສິ່ງແວດລ້ອມ (ຖ້າແມ່ນກິດຈະການທີ່ນອນໃນບັນຊີການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ);
3. ພົວພັນນຳຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອຂໍໃບອະນຸຍາດປຸກສ້າງ. ຫຼັງຈາກນັ້ນຈຶ່ງສາມາດບຸກເບີກເນື້ອທີ່ ແລະ ກໍ່ສ້າງໂຮງງານໄດ້.
4. ຫຼັງຈາກກໍ່ສ້າງໂຮງງານ, ຕິດຕັ້ງເຄື່ອງຈັກສຳເລັດ ແລະ ສາມາດຜະລິດທົດລອງໄດ້ຈຶ່ງສະເໜີຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ແລະ ລະບຽບການທີ່ກ່ຽວຂ້ອງ.



Scanned with CamScanner

III. ຂໍ້ຫ້າມ:

1. ສຳລັບຜູ້ລົງທຶນ
   - ບຸກເບີກເນື້ອທີ່ ແລະ ກໍ່ສ້າງໂຮງງານ ກ່ອນໄດ້ຮັບໃບອະນຸຍາດປຸກສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
   - ສ້າງຕັ້ງໂຮງງານຢູ່ໃນເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ຫຼື ເຂດຫວງຫ້າມທາງການ;
   - ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

2. ສຳລັບພະນັກງານ
   - ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການອື່ນທຸກຮູບແບບ;
   - ກົດໜ່ວງ, ຖ່ວງດຶງ ເອກະສານ ຫຼື ປອມແປງລາຍເຊັນຜູ້ມີອຳນາດ;
   - ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ຮູບແບບໃບອະນຸຍາດດຳເນີນທຸລະກິດ


ໃບອະນຸຍາດດຳເນີນທຸລະກິດ



Scanned with CamScanner

ຂອບໃຈ



Scanned with CamScanner